**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ 3309 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 02 ກັນຍາ 2026

# ແຈ້ງການ

**ເຖິງ:** ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີການຕິດຕາມ, ກວດກາ, ການນຳເຂົ້າ, ການຈຳໜ່າຍສິນຄ້າ ປະເພດ ຢາສີແຂ້ວ ລອກຮຽນແບບ ຫຼື ປອມແປງ ຍີ່ຫໍ້: **"ໃກ້ຊິດ" ຫຼື "CLOSE UP".**

- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ການຮ້ອງທຸກຈາກຜູ້ຊົມໃຊ້ ຜ່ານສາຍດ່ວນ 1510 ໃນຄັ້ງວັນທີ 10 ສິງຫາ 2026 ກ່ຽວກັບການຊື້-ຂາຍ ສິນຄ້າປອມແປງ ແລະ ລອກຮຽນແບບ;
- ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ 20 ສິງຫາ 2026

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເນື່ອງຈາກປະຈຸບັນ ໄດ້ພົບເຫັນການໂຄສະນາຂາຍ ຢາສີແຂ້ວ ລອກຮຽນແບບ ຫຼື ປອມແປງ ຍີ່ຫໍ້ **"ໃກ້ຊິດ" ຫຼື "CLOSE UP"** ທີ່ເປັນຜະລິດຕະພັນຂອງບໍລິສັດ ຢູນີລີເວີ (Unilever) ຊຶ່ງມີການຈຳໜ່າຍເປັນວົງກວ້າງຕາມພຣັດຟອມອອນລາຍ (Facebook, TikTok, Instragram) ໃນລາຄາທີ່ຖືກກວ່າທ້ອງຕະຫຼາດ. ສິນຄ້າປອມແປງດັ່ງກ່າວໄດ້ນຳໃຊ້ຊື່, ເຄື່ອງໝາຍການຄ້າ, ການຫຸ້ມຫໍ່ ແລະ ສີສັນ ທີ່ຄ້າຍຄືກັນກັບສິນຄ້າແທ້ ເຮັດໃຫ້ຜູ້ຊົມໃຊ້ຈຳນວນຫຼາຍມີຄວາມສັບສົນ, ຕົກເປັນເຫຍື່ອ ແລະ ສັ່ງຊື້ໄປນຳໃຊ້ ຊຶ່ງສົ່ງຜົນກະທົບໂດຍກົງຕໍ່ສຸຂະພາບ, ຄວາມປອດໄພ ແລະ ຊື່ສຽງຂອງຜະລິດຕະພັນ.

ສະນັ້ນ, ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ກໍຄືຄວາມປອດໄພດ້ານສຸຂະພາບຂອງຜູ້ຊົມໃຊ້ໃນຂອບເຂດທົ່ວປະເທດຢ່າງເຂັ້ມງວດ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ເຖິງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ດັ່ງນີ້:

1. ໃຫ້ເຝົ້າລະວັງ, ສືບຫາແຫຼ່ງຕົ້ນທາງ ແລະ ກວດກາສິນຄ້າ ຢາສີແຂ້ວ ຍີ່ຫໍ້ **"ໃກ້ຊິດ" ຫຼື "CLOSE UP"** ທີ່ປອມແປງ ຫຼື ລອກຮຽນແບບ ທັງຊ່ອງທາງອອນລາຍ (Facebook, TikTok, Instragram) ແລະ ທ້ອງຕະຫຼາດທົ່ວໄປ;
2. ໃຫ້ແຕ່ງຕັ້ງເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນຂອງຕົນ ເຊັ່ນ: ສາທາລະນະສຸກ, ຕຳຫຼວດເສດຖະກິດ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອລົງຕິດຕາມ, ກວດກາ ຕາມຮ້ານຂາຍເຄື່ອງທົ່ວໄປ, ຕະຫຼາດ, ຊຸບເປີມາກເກັດ, ສູນການຄ້າ ແລະ ຊ່ອງທາງການຂາຍອອນລາຍຕ່າງໆ. ຖ້າຫາກ ພົບເຫັນການລະເມີດ ໃຫ້ຍຶດ, ອາຍັດ ຫຼື ທຳລາຍສິນຄ້າດັ່ງກ່າວຖິ້ມ ພ້ອມທັງປັບໃໝຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
3. ໃຫ້ຮີບຮ້ອນອອກແຈ້ງການເຕືອນໄພ ແລະ ສົ່ງເສີມຄວາມຮູ້ຜ່ານສື່ມວນຊົນ (ວິທະຍຸ, ໂທລະພາບ, ສື່ສັງຄົມອອນລາຍ) ເພື່ອໃຫ້ຜູ້ຊົມໃຊ້ທົ່ວສັງຄົມ ຮັບຮູ້ເຖິງຄວາມສ່ຽງ, ຜົນກະທົບຕໍ່ສຸຂະພາບ ແລະ ວິທີສັງເກດສິນຄ້າປອມແປງ ຫຼື ລອກຮຽນແບບ, ໃຫ້ເລືອກຊື້ຈາກຮ້ານຄ້າທີ່ເຊື່ອຖືໄດ້ ແລະ ມີແຫຼ່ງທີ່ມາຊັດເຈນ. ຖ້າຫາກ

ພົບເຫັນເບາະແສການຈຳໜ່າຍສິນຄ້າປອມແປງ ໃຫ້ແຈ້ງຕໍ່ເຈົ້າໜ້າທີ່ ຫຼື ສາຍດ່ວນປົກປ້ອງຜູ້ຊົມໃຊ້ 1510, Facebook: ສະມາຄົມປົກປ້ອງຜູ້ຊົມໃຊ້ ຫຼື Application SIENG ທັນທີ;

4. ໃຫ້ສັງລວມ ແລະ ລາຍງານຜົນການຈັດຕັ້ງປະຕິບັດມາຍັງ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະຈຳແຕ່ລະໄລຍະ;
5. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ປອ. ບົວວັນ ວິລະວົງ

**ສະແກນຕົວຢ່າງຮູບພາບ**